# ການປູກ ຫວາຍຫອມ

ການປູກຫວາຍເພື່ອເກັບກູ້ເສັ້ນ:

ເນື່ອງຈາກວ່າຫວາຍຫອມ ເປັນຫວາຍທີ່ເກີດເປັນສຸມ ເໝາະສົມຕໍ່ການປູກເພື່ອຕັດເສັ້ນ, ຫວາຍຊະນິດນີ້ເປັນຫວາຍທີ່ໃຫຍ່ໄວ, ເສັ້ນຫວາຍຈັດຢູ່ໃນຫວາຍເສັ້ນນ້ອຍ ໜ້າຕ້າງແຕ່ 0.5 — 1.5 ຊມ. ແລະ ເປັນຫວາຍທີ່ໂຮງງານປຸງແຕ່ງ ຫວາຍນິຍົມນຳມາໃຊ້ໃນການຈັກສານ ແລະ ຈັດຢູ່ໃນຫວາຍເສັ້ນນ້ອຍອັນດັບ1.



ເສັ້ນຫວາຍທີ່ນຳໃຊ້ເຂົ້າໃນຫັດຖະກຳຈັກສານ

ສະນັ້ນການປູກຫວາຍຊະນິດນີ້ງ່າຍຄືກັນກັບການປູກຫວາຍຫອກ,ຈະຕ່າງແຕ່ໄລຍະຫ່າງຂອງການປູກນັ້ນ ຈະຫ່າງຫຼາຍກວ່າຫວາຍຫອກ, ຍ້ອນວ່າຫວາຍຊະນິດນີ້ເກີດເປັນສຸມ ແລະ ຈະຕ້ອງໄດ້ອາໃສຕົ້ນໄມ້ ເພື່ອເປັນບ່ອນປີນປ່າຍຂອງລຳຫວາຍ,ຫວາຍຫອມຈະມັກພົບເຫັນຢູ່ໃນປ່າດົງດິບ ແລະ ປ່າປະສົມໄມ້ປ່ອງແຄມນ້ຳ. ຫວາຍຫອມຈະມັກພົບເຫັນຫຼາຍຢູ່ພາກກາງ .

ແຕ່ຜ່ານການນຳມາປູກລວມພັນຢູ່ສູນຄົ້ນຄວ້າປ່າໄມ້ປີ 2000 ເຫັນວ່າມີການຈະເລີນເຕີບໂຕທາງດ້ານຄວາມຍາວດີ. ເຊິ່ງຍັງບໍ່ທັນມີໃຜນຳເອົາຫວາຍຊະນິດນີ້ມາຢູ່ກ່ອນໜ້ານີ້ໃນ ສປປ ລາວ.

## 1. ປັດໃຈທີ່ຄວນເລືອກ

- ເນື້ອທີ່ສວນປູກຈະຕ້ອງເປັນປ່າເລົ່າແກ່ ຫຼື ປ່າປະສົມທີ່ມີແສງສະຫວ່າງຜ່ານລົງປະມານ 50 % ຫຼື ໜ້ອຍກວ່ານີ້ຍິ່ງເປັນການດີ.
- ລັກສະນະຂອງດິນເປັນຊາຍແກມຕົມ
- ມີຕົ້ນໄມ້ສຳລັບປີນປ່າຍ.

## 2. ເຕັກນິກການປູກ

**ແນວພັນ ແລະ ລະດູການ:**

- ແນວພັນຕ້ອງມີອາຍຸ 9 — 12 ເດືອນ
- ລະດູການທີ່ເໝາະສົມຕໍ່ການເພາະປູກແມ່ນ ເດືອນ5 (ພຶດສະພາ )

**ໄລຍະຫ່າງການປູກ:**

- ໄລຍະຫ່າງຂອງຖັນ ແລະ ແຖວ 2X2 ແມັດ.

**ການຂຸດຂຸມ ແລະ ປູກ:**

- ຂະໜາດຂອງຂຸມ 30X30X30 ຊັງຕີແມັດ
- ຫົດນ້ຳຫຼັງຈາກປູກແລ້ວ 1 — 2 ຄັ້ງ / ອາທິດ (ຖ້າຝົນບໍ່ຕົກ)

**ການບົວລະບັດຮັກສາ:**

ພາຍຫຼັງປູກຫວາຍແລ້ວ 3 ເດືອນ ໃຫ້ເອົາຝຸ່ນຄອກໃສ່ໃນອັດຕາສ່ວນ 1 ກກ / ຕົ້ນ ຫຼື ຝຸ່ນເຄມີໃສ່ອີກ 1 ຄັ້ງ ຫຼື 200 ກຼ / ຕົ້ນ (ສູດ15— 15— 15 ຫຼື 18— 64— 00). ພ້ອມທັງອະນາໄມຫຍ້າບ່ອນທີ່ຢູ່ໃກ້ກັບຕົ້ນຫວາຍນັ້ນອອກ. ຫວາຍຫອມເມື່ອປູກໄດ້ 6 ປີ ກໍ່ສາມາດຕັດເສັ້ນຫວາຍມານຳໃຊ້ໄດ້.



ສຸມຫວາຍຫອມ

## 3. ການເກັບກູ້ເສັ້ນຫວາຍ

ເສັ້ນຂອງຫວາຍຫອມຈະແຂງ ແລະ ໝັ້ນໝຽວໃນເມື່ອອາຍຸ 6 ປີ, ຕໍ່ການວັດແທກທົດລອງເຫັນວ່າມີຂະໜາດຄວາມຍາວສະເລ່ຍ 7 ມ ຫຼື ອາດຈະຫຼາຍກວ່ານີ້ຖ້າພື້ນທີ່ເໝາະສົມກວ່າ ແລະ ມີການດູແລດີ .

(ຄຳພອນ ແສງດາລາ ແລະ ສູນທອນ ເກດພັນ 2006).



ການເກັບກູ້ເສັ້ນຫວາຍຫອມ

ຖ້າປູກຫວາຍຫອມ:

1ຮຕ=2,500 ຕົ້ນ

1 ເສັ້ນ,= 1.5 ກກ (ກິໂລກຣາມ)

ຖ້າຫາກຂາຍ:

ກິໂລກຣາມລະ 4,000 ກີບ ສາມາດສ້າງລາຍຮັບ

ໄດ້15 ລ້ານກີບ/ຮຕ .


WWF

ໂທ: 021 216080

ຂໍ້ມູນເຕັກນິກຕິດຕໍ່

ທ່ານ ຄຳພອນ ແສງດາລາ

ໂທ: 020 6861101

LEAP

ໂທ: 021 740253

ຫຼື 021 740252

SUFORD

ໂທ: 021 740544

ຫຼື 021 740543



**ພາຍໃຕ້ການຮ່ວມມື :**

ສະຖາບັນຄົ້ນຄວ້າ ເຕັກນິກ—ວິທະຍາສາດ ກະສິກຳ ແລະ ປ່າໄມ້,

ກອງສົ່ງເສີມກະສິກຳ ແລະ ປ່າໄມ້

**ສະໜັບສະໜຸນໂດຍ:**

ໂຄງການ ສົ່ງເສີມ ກະສິກຳ **(LEAP),**

ກອງທຶນອະນຸລັກທຳມະຊາດໂລກ **(WWF) & (SUFORD)**


ສູນຂໍ້ມູນຂ່າວສານການສົ່ງເສີມ

# ເຕັກນິກການປູກ

# ຫວາຍຫອມ

## *Calamus gracilis*

